ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: ໐໑໙໐ /ທຄຕລ.໒໐໒໕
ນະຄອນຫຼວງວຽງຈັນ, ວັນທີ: 17 JAN 2025

# ໜັງສືແຈ້ງການ

**ເຖິງ:** ທ່ານ ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ;
ທ່ານ ຜູ້ອຳນວຍການໃຫຍ່ ຕະຫຼາດຫຼັກຊັບລາວ;
ບັນດາຜູ້ຖືຮຸ້ນ ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ທີ່ເຄົາລົບ ແລະ ນັບຖື,

**ເລື່ອງ:** ການແກ້ໄຂປ່ຽນແປງໃບທະບຽນວິສາຫະກິດໃໝ່ ຂອງ ທຄຕລ.

– ອີງຕາມ ມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ທຄຕລ ປະຈຳປີ **2023** ຄັ້ງວັນທີ: **29** ເມສາ **2024.**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍຖືເປັນກຽດຮຽນມາຍັງທ່ານຊາບວ່າ ພາຍຫຼັງກອງປະຊຸມຜູ້ຖືຮຸ້ນ ທຄຕລ ປະຈຳປີ **2023** ຄັ້ງວັນທີ: 29 ເມສາ 2024 ໄດ້ຮັບຮອງການປ່ຽນແປງມູນຄ່າກຳນົດຮຸ້ນ **(Par Value)** ຂອງ ທຄຕລ ໂດຍການແຕກຮຸ້ນອອກ **(Stock Split)** ຕາມອັດຕາສ່ວນ **1/5,** ເຮັດໃຫ້ມູນຄ່າກຳນົດຮຸ້ນປ່ຽນແປງຈາກ **5,000** ກີບຕໍ່ຮຸ້ນ ມາເປັນ **1,000** ກີບ ຕໍ່ຮຸ້ນ ແລະ ຈຳນວນຮຸ້ນຂອງ ທຄຕລ ເພີ່ມຂຶ້ນຈາກເດີມ **207,723,300** ຮຸ້ນ ເປັນ **1,038,616,500** ຮຸ້ນ ໂດຍທຶນຈົດທະບຽນຍັງຄົງເທົ່າເດີມ, ມູນຄ່າຫຼັກຊັບຕາມລາຄາຕະຫຼາດບໍ່ມີການປ່ຽນແປງ ແລະ ຍັງຄົງຮັກສາສັດສ່ວນການຖືຄອງຮຸ້ນຂອງຜູ້ຖືຮຸ້ນໄວ້ຕາມເດີມ. ມາຮອດປັດຈຸບັນ, ທຄຕລ ໄດ້ດຳເນີນການປ່ຽນແປງໃບທະບຽນວິສາຫະກິດໃໝ່ ແລະ ໄດ້ຮັບການຮັບຮອງການປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ **16** ມັງກອນ **2025** ຕາມລາຍລະອຽດດັ່ງລຸ່ມນີ້:

| ລາຍລະອຽດການປ່ຽນແປງ | ກ່ອນການປ່ຽນແປງ (ຂໍ້ມູນເດີມ) | ຫຼັງການປ່ຽນແປງ (ຂໍ້ມູນໃໝ່) |
|---|---|---|
| ມູນຄ່າກຳນົດຕໍ່ຮຸ້ນ | **5,000** ກີບຕໍ່ຮຸ້ນ | **1,000** ກີບຕໍ່ຮຸ້ນ |
| ຈຳນວນຮຸ້ນທັງໝົດ | **207,723,300** ຮຸ້ນ | **1,038,616,500** ຮຸ້ນ |
| ທຶນຈົດທະບຽນ (ບໍ່ປ່ຽນແປງ) | **1,038,616,500,000.000** ກີບ | **1,038,616,500,000.000** ກີບ |

ປັດຈຸບັນ ທຄຕລ ກຳລັງຢູ່ໃນຂັ້ນຕອນດຳເນີນການປະກອບເອກະສານການແຕກຮຸ້ນອອກຢ່າງເປັນທາງການໃຫ້ແກ່ຕະຫຼາດຫຼັກຊັບລາວ ຕາມລະບຽບການ. ດັ່ງນັ້ນ, ຈຳນວນຮຸ້ນທີ່ຍັງມີການຊື້-ຂາຍໃນຕະຫຼາດຫຼັກຊັບລາວຍັງຄົງເປັນມູນຄ່າກຳນົດຕໍ່ຮຸ້ນ ແລະ ຈຳນວນຮຸ້ນເດີມ. ພາຍຫຼັງ ທຄຕລ ສຳເລັດການຍື່ນເອກະສານແຕກຮຸ້ນຢ່າງເປັນທາງການຮຽບຮ້ອຍແລ້ວ ມູນຄ່າກຳນົດຕໍ່ຮຸ້ນ ແລະ ຈຳນວນຮຸ້ນຈະປັບປ່ຽນໂດຍອັດຕະໂນມັດ. (ຕົວຢ່າງ: ຫາກຜູ້ຖືຮຸ້ນເດີມຖືຄອງຮຸ້ນຢູ່ໃນຈຳນວນ **100** ຮຸ້ນ ພາຍຫຼັງຈາກຕະຫຼາດຫຼັກຊັບລາວດຳເນີນການແຕກຮຸ້ນສຳເລັດຮຽບຮ້ອຍແລ້ວ ຈຳນວນຮຸ້ນກໍຈະເປັນ **500** ຮຸ້ນ ທັນທີ ໃນຂະນະທີ່ມູນຄ່າຮຸ້ນຍັງເທົ່າເດີມ).

ດັ່ງນັ້ນ, ຈຶ່ງຂໍຮຽນແຈ້ງມາຍັງທ່ານເພື່ອຊາບ.

**ຜູ້ອຳນວຍການ**

ບັນທະລາດ ແກ້ວປະເສີດ